DEVELOPMENTAL DISABILITIES ADMINISTRATION (DDA)

# ການປະຊຸມເຣື່ອງແຜນການບໍຣິການຈຸດລວມໃສ່ບຸກຄົນ ແລະ ການຕີຣາຄາປະເມີນຜົນປະຈຳປີ

# Person Centered Service Planning and Annual Assessment Meeting

ວັນທີ:

ຊື່ ແລະ ທີ່ຢູ່ຂອງຜູ້ຮັບການຊ່ວຍເຫລືອ

ຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າຂອງຜູ້ຮັບການຊ່ວຍເຫລືອ

ມາຍັງ: ,

ມັນເຖີງເວລາແລ້ວສຳລັບການຕີຣາຄາປະເມີນຜົນປະຈຳປີ ແລະ ການປະຊຸມວາງແຜນຈຸດລວມໃສ່ບຸກຄົນຂອງທ່ານ. ຂ້າພະເຈົ້າຈະໂທຣະສັບໄປຫາທ່ານໃນໄວໆນີ້, ຫລື ທ່ານສາມາດໂທຣະສັບມາຫາຂ້າພະເຈົ້າ, ເພື່ອຈະເຮັດໝາຍນັດເວລາທີ່ຈະພົບກັນ.

ເມື່ອເວລາຂ້າພະເຈົ້າໂທມາ, ກະຣຸນາບອກໃຫ້ຂ້າພະເຈົ້າຮູ້ຈັກວ່າທ່ານຢາກຈະເຮັດໃຫ້ການປະຊຸມຂອງທ່ານຖືກຈັດຂຶ້ນເມື່ອໃດ ແລະ ຢູ່ໃສ. ຖ້າຫາກວ່າທ່ານເລືອກເອົາບ່ອນໃດບ່ອນນຶ່ງນອກຈາກເຮືອນຂອງທ່ານ, ຂ້າພະເຈົ້າຍັງຖືກບົ່ງໃຫ້ເຮັດໝາຍນັດເວລາເມື່ອໃດຂ້າພະເຈົ້າສາມາດໄປຢ້ຽມຢາມທ່ານຢູ່ໃນເຮືອນຂອງທ່ານ.

ໃນຣະຫວ່າງການປະຊຸມຂອງທ່ານ, ພວກເຮົາຈະຕິດຕາມການນຳພາຂອງທ່ານ:

- ພວກເຮົາຈະມີເວລາທີ່ຈະເວົ້າລົມກັນກ່ຽວກັບຈຸດເປົ້າໝາຍ ແລະ ຄວາມຕ້ອງການຂອງທ່ານກ່ອນການຕີຣາຄາປະເມີນຜົນເບິ່ງການອູ້ມຊູທີ່ທ່ານອາດຈະຕ້ອງການ.
- ກະຣຸນາເຊີນເອົາຄົນໃດຄົນນຶ່ງທີ່ທ່ານຕ້ອງການໃຫ້ມາເປັນພາກສ່ວນຂອງການປະຊຸມຂອງທ່ານ, ລວມທັງບຸກຄົນທີ່ທ່ານຮູ້ສຶກວ່າຈະຮູ້ຈັກທ່ານດີທີ່ສຸດ. ຂ້າພະເຈົ້າອາດຈະຕ້ອງໄດ້ໂທຫາຜູ້ບໍຣິການຂອງທ່ານເພື່ອຈະຖາມເອົາເບິ່ງຣາຍຣະອຽດກ່ຽວກັບການອູ້ມຊູທີ່ເຂົາເຈົ້າເອົາໃຫ້.
- ແຜນການຂອງທ່ານຈະລວມເອົາຈຸດເປົ້າໝາຍຂອງທ່ານ, ການບໍຣິການທີ່ຖືກຈ່າຍເງິນໃຫ້, ແລະ ການອູ້ມຊູແນວອື່ນທຸກໆຢ່າງທີ່ທ່ານເລືອກເອົາເພື່ອຈະຊ່ວຍເຫລືອທ່ານໃຫ້ບັນລຸຈຸດເປົ້າໝາຍຂອງທ່ານ.

ຂ້າງລຸ່ມນີ້ແມ່ນແຫລ່ງຊ່ວຍເຫລືອບາງຢ່າງຊຶ່ງຈະຊ່ວຍເຫລືອທ່ານໃຫ້ຕຽມພ້ອມສຳລັບການປະຊຸມຂອງທ່ານ:

- ເຄື່ອງມືໜ້າດຽວງ່າຍໆທີ່ທ່ານສາມາດໃຊ້ເພື່ອຈະຊ່ວຍທ່ານໃຫ້ຄິດເຖີງກ່ຽວກັບຈຸດເປົ້າໝາຍຂອງທ່ານ (ລວມມານຳ)
- ປຶ້ມຄູ່ມືສອງຫົວທີ່ອະທິບາຍການບໍຣິການຂອງພະແນກປົກຄອງຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ (Developmental Disabilities Administration) (ລວມມານຳ)
- ເຄື່ອງມືການວາງແຜນຈຸດລວມໃສ່ບຸກຄົນອອນລາຍນ໌ທີ່ຖືກເຮັດອອກມາໂດຍ Developmental Disabilities Council ແລະ Arc of Washington State: www.mylifeplan.guide
- ແວບໄຊທ໌ອີກບ່ອນນຶ່ງທີ່ສາມາດຊ່ວຍເຫລືອທ່ານວາງແຜນຊີວິດທີ່ທ່ານຕ້ອງການແມ່ນ www.lifecoursetools.com

ກະຣຸນາຕິດຕໍ່ມາຫາຂ້າພະເຈົ້າຖ້າຫາກວ່າທ່ານມີຄຳຖາມ ຫລື ຄວາມຂ້ອງໃຈແນວໃດ.

ຂ້າພະເຈົ້າຍິນດີລໍຖ້າທີ່ຈະພົບກັບທ່ານ.

ຂອບໃຈ,

| ຊື່ຂອງຜູ້ຈັດການເອກສານ | ເລກໂທຣະສັບ | ທີ່ຢູ່ອີແມລ໌ |
|---|---|---|
| | | |

ສອດມານຳ: ປຶ້ມຄູ່ມືການສະລະສິດ HCBS (DSHS 22-605)
ແຜນທີ່ຫົນທາງໄປສູ່ການບໍຣິການ (DSHS 22-822)
ປະວັດໂດຍຫຍໍໜ້າດຽວ

cc: NSA ຜູ້ຕາງໜ້າ

## ຄຳແນະນຳສຳລັບກອງປະຊຸມການວາງແຜນການບໍລິການທີ່ເປັນສູນກາງຂອງບຸກຄົນແລະແຈ້ງການການປະເມີນປະຈຳປີ

### ຂ້ອຍໃຊ້ແບບຟອມນີ້ເມື່ອໃດ?

ທ່ານໃຊ້ແບບຟອມນີ້ເພື່ອແຈ້ງໃຫ້ລູກຄ້າ ແລະຜູ້ປົກຄອງຕາມກົດໝາຍຂອງລູກຄ້າ ຫຼືຜູ້ຕາງໜ້າຂອງການປະເມີນທີ່ຈະມາເຖິງ ແລະກອງປະຊຸມການວາງແຜນການບໍລິການທີ່ເປັນໃຈກາງຢ່າງໜ້ອຍ 60 ມື້ກ່ອນການສິ້ນສຸດຂອງໄລຍະແຜນການ.